| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດດໍາເນີນທຸລະກິດໃຫ້ບໍລິການອິນເຕີເນັດກາເຟ ປະເພດທີ 1 | |
| ປະເພດຂອງໃບອະນຸຍາດ | ໃບອະນຸຍາດດໍາເນີນທຸລະກິດ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| MoPT-ITTD-9 | 31.10.2017 | ກົມເຕັກໂນໂລຊີຂໍ້ມູນຂ່າວສານ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄໍາຮ້ອງ | ຢູ່ທີ່ຫ້ອງການເຈົ້າຫນ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | J - ຂໍ້ມູນຂ່າວສານ ແລະ ການຕິດຕໍ່ສື່ສານ |
| ຈຸດປະສົງທີ່ຕ້ອງຂໍ ໃບ ອະນຸຍາດ | ເພື່ອຮັບປະກັນໃຫ້ການບໍລິການອິນເຕີເນັດທີ່ສະໜອງບໍລິການ ໃຫ້ແກ່ ສາທາລະນະ ໃຫ້ສາມາດນໍາໃຊ້ອິນເຕີເນັດຢ່າງກວ້າງຂວາງ ແລະ ທົ່ວເຖິງ ມີຄຸນນະພາບ ວ່ອງໄວ ແລະ ປອດໄພ |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງດໍາເນີນທຸລະກິດໃຫ້ບໍລິການອິນເຕີເນັດກາເຟ ຢູ່ ສປປ ລາວ ຊຶ່ງແມ່ນ ການສະໜອງບໍລິການເຂົ້າເຖິງອິນເຕີເນັດ ແກ່ຜູ້ຊົມໃຊ້ທົ່ວໄປໃນຂອບເຂດຮ້ານສະເພາະ |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ແມ່ນແລ້ວ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | www.ITD.Gov.la |
| ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່? | ແມ່ນແລ້ວ |
| ຄໍາເຫັນອື່ນ ທີ່ຕິດພັນ ກັບ ໃບອະນຸຍາດ | ຜູ້ໄດ້ຮັບອະນຸຍາດຕ້ອງຈັດຕັ້ງປະຕິບັດເງື່ອນໄຂການດໍາເນີນທຸລະກິດທັງໝົດ ພາຍໃນ 60 ວັນ ນັບແຕ່ມື້ໄດ້ຮັບອະນຸຍາດເປັນຕົ້ນໄປ. |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| ໄລຍະເວລາໃນການ ພິຈາລະນາຄໍາຮ້ອງ ໃນ ການອອກໃບອະນຸຍາດ | 10 | |
| ຄຸນະສົມບັດຂອງຜູ້ຂໍໃບ | 1. ຕ້ອງມີສະຖານທີ່ເໝາະສົມ ໂດຍມີເນື້ອທີ່ 2 ຕາແມັດ ຕໍ່ຄອມພິວເຕີ 1 ໜ່ວຍ, | |

| ຄຸນະສົມບັດ ແລະ ເອກະສານປະກອບ | |
|---|---|
| **ອະນຸຍາດ** | ມີພື້ນທີ່ຮ້ານບໍ່ຕໍ່າກວ່າ 8 ຕາແມັດ, ມີແສງສະຫວ່າງພຽງພໍ ແລະ ມີອາກາດຖ່າຍເທສະດວກ (ສໍາລັບໃບອະນຸຍາດ ປະເພດທີ 1); 2. ຕ້ອງຮັບປະກັນຄວາມປອດໄພ ແກ່ຜູ້ໃຊ້ບໍລິການ ເປັນຕົ້ນ ລະບົບປ້ອງກັນອັກຄີໄພ,ກັນໄຟຟ້າລັດວົງຈອນ, ເຕັກນິກຖືກຕ້ອງຕາມມາດຕະຖານ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ; 3. ຕ້ອງມີລະບົບກ້ອງວົງຈອນປິດ ທີ່ສາມາດບັນທຶກການເຄື່ອນໄຫວຂອງຜູ້ໃຊ້ບໍລິການຢູ່ຮ້ານ ຫຼື ສະຖານທີ່ໃຫ້ບໍລິການອິນເຕີເນັດກາເຟ ເປັນເວລາບໍ່ຕໍ່າກວ່າ 30 ວັນ; 4. ຕ້ອງສະແດງໃບອະນຸຍາດດໍາເນີນທຸລະກິດ, ອັດຕາຄ່າບໍລິການ ແລະ ລະບຽບການຕ່າງໆ ພາຍໃນຮ້ານໃຫ້ຜູ້ໃຊ້ບໍລິການ ສາມາດເຫັນ ແລະ ອ່ານໄດ້ງ່າຍ; 5. ຕ້ອງມີລະບົບເຄືອຂ່າຍຄອມພິວເຕີ ທີ່ມີສັນຍານອິນເຕີເນັດ ພາຍໃນຂອບເຂດຮ້ານ ຫຼື ສະຖານທີ່ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນເທົ່ານັ້ນ; 6. ຕ້ອງມີໂປຣແກຣມປ້ອງກັນໄວຣັດ ພາຍໃນຄອມພິວເຕີ; 7. ຕ້ອງມີຄວາມໄວອິນເຕີເນັດ ຢ່າງໜ້ອຍ 2 Mbps ຂຶ້ນໄປ; 8. ລະບົບເຄືອຂ່າຍຄອມພິວເຕີແບບບໍ່ມີສາຍ ແມ່ນອະນຸຍາດສະເພາະລະບົບ WiFi ທີ່ຍ່ານຄວາມຖີ່ 2.4 GHz ຫຼື 5GHz ເທົ່ານັ້ນ ແລະ ຄວາມແຮງສົ່ງອອກຕ້ອງບໍ່ເກີນ 0.05 watt. |
| **ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ?** | ໄດ້ປະຕິເສດ ໃນກໍລະນີທີ່ຜູ້ສະໝັກບໍ່ສາມາດຕອບສະໜອງເງື່ອນໄຂ ຫຼື ຂໍ້ກໍານົດ ທີ່ໄດ້ກໍານົດໄວ້ພາຍໃຕ້ກົດໝາຍ |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| **ໃບອະນຸຍາດມີກໍານົດອາຍຸ ຫລືບໍ່?** | **ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ?** |
| ແມ່ນແລ້ວ | 12 |
| **ຂັ້ນຕອນ ແລະ ເງື່ອນໄຂ ສໍາລັບການຕໍ່ອາຍຸໃບອະນຸຍາດ** | ການຕໍ່ໃບອະນຸຍາດນີ້ ຕ້ອງຍື່ນ ກ່ອນວັນໝົດອາຍຸ ຢ່າງໜ້ອຍ 30 ວັນ |

| ຄ່າທໍານຽມ | | | | |
|---|---|---|---|---|
| **ມີຄ່າທໍານຽມແບບຟອມຄໍາ ຮ້ອງ ຫລືບໍ່?** | **ຄ່າບໍລິການວິຊາການ** | **ຄ່າທໍານຽມ** | **ຄ່າແບບຟອມຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 200000.00 | 50000.00 | 50000.00 | 300000.00 |
| **ຄໍາເຫັນ** | ອີງຕາມ ລັດຖະດໍາລັດ 003/ປທ | | | |

| ຄ່າທຳນຽມການຕໍ່ອາຍຸ | | | | |
|---|---|---|---|---|
| **ມີຄ່າທຳນຽມ ແບບຟອມ ຄຳຮ້ອງ ຂໍຕໍ່ອາຍຸ ຫລືບໍ່?** | **ຄ່າບໍລິການວິຊາການ** | **ຄ່າທຳນຽມ** | **ຄ່າ ແບບຟອມ ຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 200000.00 | 50000.00 | 50000.00 | 300000.00 |
| **ຄຳເຫັນ** | ອີງຕາມ ລັດຖະດຳລັດ 003/ປທ | | | |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່ກົດລະບຽບ** | **ເລກທີ** | **ວັນທີ** | **ຄຳເຫັນ** |
| ກົດໝາຍວ່າດ້ວຍ ເຕັກໂນໂລຊີການສື່ສານ ຂໍ້ມູນຂ່າວສານ | 02/ສພຊ | 11.07.2016 | ພາກທີ V ການດຳເນີນທຸລະກິດກ່ຽວກັບເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ມາດຕາ 35 ເຖິງ ມາດຕາ 38 |
| ຂໍ້ຕົກລົງ ວ່າດ້ວຍ ການໃຫ້ບໍລິການອິນເຕີເນັດກາເຟ | 828/ປທສ | 11.03.2015 | ໝວດທີ 2 ປະເພດ ແລະ ການອອກອະນຸຍາດໃຫ້ບໍລິການອິນເຕີເນັດກາເຟ ມາດຕາ 5 ເຖິງ ມາດຕາ 13 |

| ເອກະສານປະກອບ |
|---|
| **ຊື່ເອກະສານ** |
| ໃບຢັ້ງຢືນວຸດທິການສຶກສາ |
| ສັນຍາເຊົ່າທີ່ຕັ້ງສຳນັກງານ |
| ສຳເນົາບັດປະຈຳຕົວ/ສຳມະໂນຄົວຂອງອຳນວຍການ |
| ໃບທະບຽນວິສາຫະກິດ ຂອງບໍລິສັດຈຳກັດ |
| ແຜນອຸປະກອນຮັບໃຊ້ |
| ໃບຢັ້ງຢືນທີ່ຕັ້ງສຳນັກງານ |
| ໃບມອບສິດໃຫ້ຜູ້ຕາງໜ້າມາພົວພັນວຽກກໍລະນີຜູ້ສະເໜີບໍ່ສາມາດມາພົວພັນດ້ວຍຕົວເອງ |
| ໃບຢັ້ງຢືນທີ່ຢູ່ |

| ເອກະສານປະກອບ |
|---|
| ຮູບຖ່າຍຂອງອໍານວຍການ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2016 | 0 | 57 |